# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 4 ມີນາ 2007 (03-4-2007)

## <u>ພຣະເຢຊູຊົງໃຫ້ອະພັຍບາບແກ່ພວກເຮົາ</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ໂຢຮັນ 8:2-11,30-36

**<u>ພຣະຄັມພີແຫ່ງຄວາມຈິງ:</u>** ພຣະເຢຊູຈະຊົງໃຫ້ອະພັຍແກ່ຂ້າພະເຈົ້າໄດ້ບໍ່, ເຖິງແມ່ນບັນຫານັ້ນຈະນ້ອຍຫລືໃຫຍ່?

**<u>ຜົນສະທ້ອນຕໍ່ຊີວິດ:</u>** ໃນບົດຮຽນນີ້ຈະຊ່ວຍໃຫ້ທ່ານຄົ້ນພົບວ່າພຣະເຢຊູໄດ້ຊົງເຮັດສິ່ງໃດແດ່ເພື່ອພວກເຮົາໂດຍ:

* ເຂົ້າໃຈວ່າ ເຖິງວ່າບາບຈະຮ້າຍແຮງຂນາດໃດ, ກໍຈະບໍ່ຢູ່ເຫນືອຄວາມສາມາດຂອງພຣະເຢຊູທີ່ຈະໃຫ້ອະພັຍ; ແລະ
* ຍອມຮັບການປ່ຽນແປງເພື່ອຈະມີຊີວິດທີ່ບໍຣິສຸດ ເພາະພຣະເຢຊູໄດ້ຊົງໃຫ້ອະພັຍຄວາມບາບຂອງພວກທ່ານແລ້ວ.

### <u>ພຣະເຢຊູສາມາດໃຫ້ອະພັຍຂ້າພະເຈົ້າໄດ້ຈິງຫລື ເຖິງແມ່ນວ່າ ຂ້າພະເຈົ້າໄດ້ກະທຳສິ່ງໃດໄວ້?</u>

ທອມມີ ມີຄວາມລຳບາກໃຈໃນການທີ່ຈະເຊື່ອວ່າ ພຣະເຢຊູຈະສາມາດໃຫ້ອະພັຍຄວາມບາບທີ່ລາວໄດ້ເຮັດເພາະການປະຮ້າງແລະເປັນຄວາມຜິດຂອງລາວເອງ ແລະຍັງເປັນເຫດໃຫ້ທຳລາຍຊີວິດຂອງຕົວເອງແລະລູກ ໆນຳອີກ. ລາວມີຄວາມສົງໃສວ່າ "ຈະມີຜູ້ໃດຫນໍທີ່ຈະສາມາດໃຫ້ອະພັຍແກ່ຄົນທີ່ເຮັດໃຫ້ຄົນອື່ນໄດ້ຮັບຄວາມເຈັບຊໍ້າເຖິງຂນາດນີ້?" ແຕ່ລາວກໍຍັງຄົງອ່ານພຣະຄັມພີຢູ່ຕໍ່ໄປຕລອດດ້ວຍຄວາມຮູ້ສຶກສຳຜັດທີ່ມີຢູ່ພາຍໃຈຈິດໃຈຂອງລາວວ່າພຣະເຈົ້າຈະຜ່ອນຜັນໃຫ້ອະພັຍໃນການຕັດສິນໃຈຜິດພາດອັນໃຫຍ່ຫລວງໃນຊີວິດລາວຄັ້ງນີ້ໄດ້.

ທ່ານຄິດວ່າ ເປັນດ້ວຍສາເຫດອັນໃດຈຶ່ງມີຫລາຍຄົນບໍ່ມີຄວາມຫມັ້ນໃຈທີ່ຈະເຊື່ອວ່າພຣະເຈົ້າຈະໃຫ້ອະພັຍພວກເຂົາໄດ້? ເປັນຫຍັງຈຶ່ງເປັນການຍາກຕໍ່ຄົນຈຳນວນຫລາຍຄົນທີ່ຈະໃຫ້ອະພັຍແມ້ແຕ່ກັບຕົວເຂົາເອງ? ເມື່ອໄດ້ຮຽນບົດຮຽນນີ້ກໍຈະໄດ້ພົບໃນສິ່ງທີ່ຈະຊ່ວຍໃຫ້ພວກເຮົາເຂົ້າໃຈເຖິງນໍ້າພຣະທັຍຂອງພຣະເຈົ້າວ່າ ເຖິງແມ່ນວ່າພຣະເຈົ້າສາມາດເລືອກທີ່ຈະເຮັດສິ່ງໃດກໍໄດ້ຕາມນໍ້າພຣະທັຍ, ແຕ່ພຣະອົງຊົງທີ່ຈະເລືອກໃຫ້ອະພັຍແທນການລົງໂທດ.

### <u>ສຶກສາພຣະຄັມພີ</u>

### 1. <u>ຈັບໄດ້ໃນຂນະທີ່ເຮັດຢູ່</u> (ໂຢຮັນ 8:2-4)

ການບັນທຶກພຣະທັມໂຢຮັນ 7:53-8:11 ໄດ້ປາກົດຢູ່ໃນພື້ນຖານພຣະຄັມພີສັກສິດເພາະວ່າຈະບໍ່ປາກົດເຫັນການບັນທຶກທີ່ລະອຽດຢູ່ໃນພຣະທັມອື່ນ ໆ, ໃນຫນັງສືຫລາຍມ້ວນເຊື່ອວ່າເຫດການທີ່ພິເສດສຸດທີ່ເກີດຂຶ້ນໄດ້ບັນທຶກໄວ້ໃນຊີວິດຂອງພຣະຄຣິດ. ຄືເຣື່ອງລາວຂອງຍິງຄົນນຶ່ງທີ່ຖືກຈັບໄດ້ໃນຂນະທີ່ຫລິ້ນຊູ້ຈຶ່ງເປັນແບບຢ່າງທຳອິດທີ່ພຣະເຢຊູຄຣິດໄດ້ແກ້ໄຂບັນຫາເຣື່ອງການເຮັດຜິດບາບຂອງມະນຸດ.

ພຣະເຢຊູໄດ້ສະເດັດເຂົ້າໄປ**ໃນບໍຣິເວນພຣະວິຫານ**, ທີ່ນັ້ນພຣະອົງໄດ້**ສັ່ງສອນ**ເຂົາກ່ຽວກັບຈຸດປະສົງທີ່ພຣະອົງສະເດັດມາເພື່ອເຮັດໃຫ້ພຣະຄັມພີເຕີມສົມບູນຄົບຖ້ວນ. ແລະແນ່ນອນມີກຸ່ມຄົນຈຳນວນຫລວງຫລາຍໄດ້ມາຊຸມນຸມກັນເພື່ອຟັງການສັ່ງສອນຂອງພຣະອົງ. ມີຫມູ່ຄົນທີ່ມີຄວາມເຊື່ອທີ່ເຕັມລົ້ນໄດ້ມາເຊື່ອໃນພຣະຄຣິດ. ໃນນັ້ນກໍມີພວກຫົວຫນ້ານັກທັມຫລາຍຄົນຄືຜູ້ທີ່ພະຍາຍາມທີ່ສຸດເພື່ອຈະໄດ້ຢ່າງຕາມພຣະເຈົ້າໃຫ້ຖືກຕ້ອງ, ແລະມີກຸ່ມຄົນອີກກຸ່ມນຶ່ງທີ່ພວກຜູ້ນຳທາງສາສນາຖືວ່າເຂົາເປັນພວກຄົນບາບ, ຝູງຄົນພວກນີ້ກໍຕ້ອງການທີ່ຈະໄດ້ຍິນການສັ່ງສອນຂອງພຣະເຢຊູເຫມືອນກັນ, ແລະອີກບໍ່ດົນຈາກນັ້ນເທົ່າໃດພວກເຂົາກໍຈະໄດ້ເຫັນເຫດການແທ້ຈິງເກີດຂຶ້ນທີ່ຖືກັບການສອນ

ພໍດີ.

**ພວກນັກທັມແລະພວກຟາຣີຊາຍ,** ທີ່ເປັນກຸ່ມຜູ້ນຳສາສນາທີ່ມີໜ້າທີ່ຮັບຜິດຊອບໃນວັນນັ້ນ, **ໄດ້ນຳຍິງຄົນນຶ່ງທີ່ຖືກຈັບໄດ້ໃນຂນະທີ່ຫລິ້ນຊູ້ຢູ່ມາ**ຫາພຣະເຢຊູ ພວກເຂົາເຫລົ່ານັ້ນໄດ້ຢືນເປັນວົງລ້ອມຍິງຄົນນັ້ນໄວ້, ບາງທີພວກເຂົາກໍອາດຈະຮູ້ວ່າໂທດຂອງຍິງຄົນນີ້ກໍຄືຄວ່າງກ້ອນຫີນໃສ່ຈົນຕາຍຊຶ່ງພຣະຄັມພີເດີມໄດ້ສອນໄວ້ (ອພຍ. ໒໒:໒໒-໒4), ຕາມທີ່ບັນທຶກໄວ້ໃນພຣະທັມຂໍ້ນີ້ແມ່ນຕ້ອງລົງໂທດທັງສອງຄົນທີ່ມີສ່ວນຮ່ວມກັນເຮັດ, ແຕ່ພວກເຂົາໄດ້ນຳຍິງຄົນນີ້ຜູ້ດຽວມາຫາພຣະຄຣິດ, ພຣະເຢຊູຊົງຮູ້ວ່າຝູງຄົນທີ່ຢູ່ອ້ອມຮອບພຣະອົງນັ້ນແນ່ນອນບໍ່ໄດ້ມີຄວາມສົງສັຍເລີຍວ່າຍິງຄົນນີ້ຜິດຈິງຫລືບໍ່; ເພາະນາງຖືກຈັບໄດ້**ໃນຂນະທີ່ກຳລັງເຮັດຢູ່.** ພຣະເຢຊູຊົງຮູ້ວ່າກົດບັນຍັດຕອນນີ້ໄດ້ບົ່ງບອກວ່າຈະຕ້ອງເຮັດແນວໃດ, ແຕ່ພຣະອົງຊົງຕ້ອງການທີ່ຈະໃຫ້ອະພັຍແກ່ຍິງຄົນນີ້ຫລາຍກວ່າທີ່ພຣະອົງຈະຊົງລົງໂທດລາວ.

ມີຫລາຍຄົນທີ່ຖືກຈັບໄດ້ໃນຂນະທີ່ເຮັດບາບຢູ່, ແຕ່ພວກເຂົາໄດ້ພະຍາຍາມປົດບັງໄວ້ບໍ່ໃຫ້ຄົນອື່ນຮູ້. ເຖິງຢ່າງໃດກໍຕາມ, ຄົນພວກນັ້ນກໍຍັງເປັນຄົນບາບຢູ່ໃນສາຍພຣະເນດຂອງພຣະເຈົ້າແລະພວກເຂົາເອງກໍຮູ້ແກ່ໃຈຢູ່ດີ. ບໍ່ມີການກະທຳອັນໃດທີ່ຈະສາມາດເຊື່ອງຫລືປົດບັງພຣະເຈົ້າໄດ້ເຖິງແມ່ນວ່າຈະສາມາດເຊື່ອງບໍ່ໃຫ້ຄົນອື່ນຮູ້ໄດ້ກໍຕາມ (ແລະກໍບໍ່ແມ່ນສເມີໄປວ່າພວກເຮົາຈະເຊື່ອງໄດ້ສຳເຣັດທຸກເທື່ອເຫມືອນດັ່ງທີ່ຄິດໄວ້ ). ພຣະເຈົ້າຊົງເຫັນການກະທຳຄວາມຜິດບາບຂອງພວກເຮົາຕລອດເວລາ. ພຣະເຈົ້າຊົງຮູ້ວ່າພວກເຮົາຫ່າງຈາກພຣະຣັສມີຂອງພຣະອົງ ( ໂຣມ. 3:23 ). ແລະພຣະອົງເຂົ້າໃຈດີເຖິງຄ່າຈ້າງຂອງຄວາມຜິດບາບນັ້ນຄືຄວາມຕາຍ( ໂຣມ. 6:23 ). ເປັນສິ່ງມະຫັສຈັນທີ່ພຣະເຈົ້າຊົງຫລຽວເຫັນຄວາມບາບທີ່ພວກເຮົາບໍ່ສາມາດເຊື່ອງໄດ້, ແຕ່ເຖິງປານນັ້ນພຣະອົງກໍຍັງຊົງຕ້ອງການທີ່ຈະໃຫ້ອະພັຍພວກເຮົາຢູ່.

ທ່ານສາມາດທີ່ຈະນຶກວາດພາບເຖິງຄວາມອັບອາຍໃນວັນນັ້ນທີ່ຜູ້ຍິງໄດ້ເຮັດຜິດບາບ? ທຸກຄົນຮວມທັງຫົວໜ້າພວກນັກທັມພາກັນຢືນອ້ອມເປັນວົງມົນແລະລາວໄດ້ຢູ່ເຄິ່ງກາງຂອງວົງລ້ອມນັ້ນ. ເຮົາສາມາດບອກໄດ້ວ່າແມ່ນຫຍັງກຳລັງຈະເກີດຂຶ້ນ ນັ້ນຄືສິ່ງທີ່ຖືກປົດບັງໄວ້ເປັນຄວາມລັບແລະໃນຂນະນີ້ໄດ້ຖືກເປີດເຜີຍໃຫ້ທຸກຄົນໄດ້ຮູ້ແລ້ວຕໍ່ໜ້າຊຸມຊົນ. ການທີ່ຈະປະຕິເສດນັ້ນບໍ່ແມ່ນເປັນທາງອອກທີ່ລາວຈະເລືອກໄດ້ແລ້ວ; ຖ້າຈະທຳທ່າວ່າບໍ່ມີຫຍັງເກີດຂຶ້ນກໍຈະບໍ່ສາມາດທີ່ຈະໃຊ້ໃຫ້ເປັນເຫດຜົນທີ່ຈະແກ້ບັນຫາໄດ້. ລາວບໍ່ມີທາງທີ່ຈະຫລີກຫນີພົ້ນ, ສິ່ງທີ່ເຮັດໄດ້ໃນເວລານີ້ກໍຄືຢືນນິ່ງດຽວຣໍຖ້າຮັບການລົງໂທດຈາກຄວາມຜິດຂອງຕົນ. ຂອບພຣະຄຸນພຣະເຈົ້າ, ໃນບັນດາຄົນທີ່ຕີວົງອ້ອມຍິງຄົນນັ້ນໄດ້ມີຜູ້ນຶ່ງຮ່ວມຢູ່ນຳ ຄືອົງພຣະເຢຊູ!

## ໒. <u>ລົງໂທດດ້ວຍບັນຍັດຂອງພຣະເຈົ້າ</u> (ໂຢຮັນ 8: 6ຂ-11)

ພວກຫົວໜ້ານັກທັມຮູ້ຈັກກົດບັນຍັດໃນພຣະຄັມພີເດີມດີ. ພວກເຂົາໄດ້ເຕືອນພຣະເຢຊູ (ຄິດວ່າພຣະອົງຕ້ອງການທີ່ຈະໃຫ້ເຕືອນ!) ທີ່**ໂມເຊ**ໄດ້ສັ່ງໄວ້ໃນກົດບັນຍັດວ່າໃຫ້ເອົາຫີນຄວ່າງໃສ່ຄົນຢ່າງນີ້ໃຫ້ຕາຍແມ່ນເປັນການລົງໂທດຄົນຫລິ້ນຊູ້ແລະການເຮັດຜິດບາບເຣື່ອງທາງເພດອື່ນ ໆກໍໄດ້ບັນທຶກໄວ້ເຫມືອນກັນ. ພວກຫົວໜ້ານັກທັມໄດ້ທົດສອບພຣະເຢຊູວ່າພຣະອົງສົມຄວນຈະເຮັດຢ່າງໃດ.

ໂຢຮັນໄດ້ບັນທຶກພຣະທັມຕອນນີ້ເພື່ອສະແດງໃຫ້ເຫັນເຖິງອຸບາຍຂອງພວກຫົວໜ້ານັກທັມ ແທ້ຈິງແລ້ວບໍ່ແມ່ນວ່າພວກເຂົາປະຕິບັດຕາມພຣະບັນຍັດແຕ່ເປັນການ**ຫລອກ**ໃຫ້ພຣະເຢຊູເຮັດໃນສິ່ງທີ່ຕໍ່ສູ້ພຣະບັດຍັດ. ເພາະເຂົາກໍຮູ້ແລ້ວວ່າພຣະເຢຊູຈະບໍ່ສະແດງອອກດ້ວຍການລົງໂທດຄືຄວ່າງກ້ອນຫີນໃສ່ຍິງນັ້ນແຕ່ຈະໃຫ້ອະພັຍແກ່ນາງແທນ ເພາະພຣະອົງຊົງອະພັຍໂທດເຊັ່ນນີ້ມາຫລາຍຄັ້ງກ່ອນຫນ້ານັ້ນແລ້ວ. ພວກເຂົາຕ້ອງການຫາເຫດຜົນທີ່ຈະຈັບຜິດພຣະອົງວ່າບໍ່ປະຕິບັດຕາມກົດບັດຍັດໃນພຣະຄັມພີເດີມ ໂດຍການເຮັດຢ່າງນີ້ເຂົາກໍຈະ**ຫາເຣື່ອງ**ໄດ້ວ່າພຣະອົງເປັນຜູ້ປະກາດພຣະທັມປອມ. ການກະທຳຂອງພວກເຂົາໃນຄັ້ງນີ້ແມ່ນມີຜົນມາຈາກໃຫ້ປະຊາຊົນມີຄວາມໄວ້ເນື້ອເຊື່ອໃຈທາງດ້ານການປົກຄອງ ແທນທີ່ຈະເຮັດໃຫ້ຄົນທັງຫລາຍຈະເຣີນເຕີບໃຫຍ່ຂຶ້ນທາງດ້ານຈິດວິນຍານ.

ເຖິງແມ່ນວ່າໃນພຣະທັມຂອງພຣະເຈົ້າຈະບັນທຶກໄວ້ວ່າຕໍ່ສູ້ກັບຄວາມບາບ, ແຕ່ກໍມີຄົນຈຳນວນຫລາຍທີ່ເຂົ້າໃຈຜິດແລະໃຊ້ພຣະຄຳພຣະເຈົ້າໃນທາງທີ່ບໍ່ຖືກຕ້ອງ. ພວກນັກທັມແລະພວກຟາຣີຊາຍຊອກຫາຫົນທາງທີ່ຈະຮັກສາກົດ

ບັນຍັດໃນພຣະຄັມພີໄວ້, ແຕ່ຫລາຍຄົນໃນພວກເຂົາບໍ່ໄດ້ສົນໃຈທີ່ຈະທຳຄວາມເຂົ້າໃຈໃນກົດບັນຍັດທາງດ້ານຈິດວິນຍານ. ພຣະເຈົ້າໄດ້ຊົງປະທານກົດບັນຍັດໄວ້ໃຫ້ໂມເຊກໍເພື່ອຄົນທັງຫລາຍໄດ້ເຂົ້າໃຈໃນຄວາມຜິດບາບຂອງຕົນເອງ ແລະຮູ້ວ່າເຂົາຕ້ອງການເພິ່ງພຣະຄຸນ. ກົດບັນຍັດໄດ້ເປີດເຜີຍໃຫ້ເຫັນວ່າມະນຸດທຸກຄົນເປັນຄົນຜິດຄົນບາບແລະພວກເຂົາບໍ່ສາມາດທີ່ຈະຮັກສາກົດບັນຍັດຫມົດທຸກຂໍ້ຕາມມາດຕະຖານໄດ້. ໃນເວລາແລະມີເຫດການທີ່ຜູ້ຍິງຄົນນັ້ນໄດ້ຮັບການອະພັຍຈາກຄວາມຜິດບາບໃນການຫລິ້ນຊູ້ ເປັນຮູບພາບທີ່ເກີດຂຶ້ນກັບຊີວິດຈິງທີ່ພຣະເຢຊູຊົງສອນກ່ຽວກັບເຫດຜົນທີ່ພຣະເຈົ້າຊົງເລືອກທີ່ຈະໃຫ້ອະພັຍມະນຸດແທນການລົງໂທດ.

ພຣະເຢຊູບໍ່ໄດ້ສະແດງຕົນເອງວ່າຕໍ່ສູ້ກັບກົດບັນຍັດທີ່ມີຄຳສັ່ງໄວ້ໃນພຣະທັມອົພຍົບ ໒໒:໒໒-໒໔. ພຣະອົງໄດ້ເຮັດໃຫ້ຄວາມຜິດໃນການຫລິ້ນຊູ້ຄັ້ງນີ້ເປັນຈຸດເດັ່ນຄືບໍ່ໄດ້ຄວ່າງກ້ອນຫີນໃສ່ລາວ, ແຕ່ພຣະອົງໄດ້ປະທານການອະພັຍໃຫ້ໃນຄວາມຜິດບາບທີ່ລາວໄດ້ເຮັດ. ການແກ້ຕົວຕໍ່ຄວາມຜິດບາບແລະການໃຫ້ອະພັຍໃນຄວາມບາບ ທັງສອງຢ່າງນີ້ມີຄວາມຫມາຍທີ່ແຕກຕ່າງກັນ, ແຕ່ພຣະເຢຊູຊົງເລືອກເຮັດກໍຣະນີທີສອງຄືການໃຫ້ອະພັຍ.

## 3. <u>ເລີ້ມຕົ້ນໃຫມ່ທີ່ເປັນໄປໄດ້</u> (ໂຢຮັນ 8:6໒-11)

ພຣະເຢຊູຊົງນ້ອມພຣະກາຍລົງໃຊ້ນີ້ວພຣະຫັດຂຽນທີ່ດິນຊາຍ, ແຕ່ບໍ່ມີຜູ້ໃດຮູ້ວ່າທີ່ພຣະອົງຂຽນນັ້ນວ່າຢ່າງໃດໃນເວລານັ້ນ, ແມ່ນແຕ່ໃນການບັນທຶກພຣະທັມກໍບໍ່ໄດ້ບອກວ່າພຣະອົງຊົງຂຽນຫຍັງ. ໂດຍທີ່ພວກເຮົາກໍບໍ່ຮູ້ໃນສິ່ງທີ່ພຣະອົງໄດ້ຂຽນ, ພວກເຮົາຍັງບໍ່ຮູ້ອີກວ່າທີ່ພຣະອົງຊົງເຮັດຢ່າງນັ້ນແມ່ນການທຳທ່າເມີນເສີຍຈາກພວກນັກທັມຫລືບໍ່. ພວກເຂົາຕັ້ງຄວາມຫວັງໄວ້ວ່າພຣະອົງຈະຊົງຈັບເອົາກ້ອນຫີນມາຄວ່າງໃສ່ຍິງນັ້ນ. ແທນທີ່ຈະເຮັດຢ່າງນັ້ນພຣະອົງໄດ້ໂນ້ມພຣະກາຍລົງຂຽນໃສ່ດິນຊາຍ.

ພວກນັກທັມໄດ້**ບີບບັງຄັບ**ພຣະເຢຊູໃຫ້ຄວ່າງກ້ອນຫີນໃສ່ຍິງນັ້ນ, ແຕ່ພຣະເຢຊູຊົງກ່າວວ່າ " **ຜູ້ໃດໃນພວກເຈົ້າທີ່ບໍ່ມີຄວາມຜິດບາບກໍໃຫ້ຜູ້ນັ້ນເອົາຫີນຄວ່າງໃສ່ຍິງຄົນນີ້ກ່ອນຫມູ່** " ພຣະອົງໄດ້ຊົງເຕືອນພວກເຂົາໄປໃນຕົວວ່າ ທຸກຄົນຮວມທັງພວກເຂົາດ້ວຍໄດ້ເຮັດຜິດຕໍ່ກົດບັດຍັດເຫມືອນກັນ, ແລະໃນຈຸດນີ້ຂອງກົດບັນຍັດທີ່ໄດ້ສະແດງໃຫ້ພວກເຂົາຮູ້ວ່າທຸກຄົນເປັນຄົນຜິດຄົນບາບ. ເມື່ອພຣະເຢຊູເງີຍພຣະພັກຂຶ້ນມາຈາກການຂຽນໃສ່ດິນຊາຍເພື່ອຈະເບິ່ງວ່າພວກເຂົາຈະເຮັດແນວໃດຕໍ່ໄປ. ໃນທີ່ສຸດພວກເຂົາກໍຫນີໄປເທື່ອລະຄົນ.

ບາງທີພວກເຂົາອາດຈະເກີດຄວາມອັບອາຍ, ແລະຮູ້ເມື່ອຄິງວ່າພວກຕົນໄດ້ໃຊ້ຜູ້ຍິງຄົນນີ້ເປັນເຫຍື່ອໃນການຫາຜົນປໂຍດໃນການປົກຄອງຂອງພວກເຂົາຊື່ ໆ ກໍເຫມືອນກັບຜູ້ຊາຍທີ່ຫລອກຍິງນີ້ໃຫ້ຕົກເປັນເຫຍື່ອຂອງຕັນຫາຣາຄະເທົ່ານັ້ນ. ບໍ່ຕ້ອງສົງໃສເລີຍພວກຫົວຫນ້ານັກທັມທັງຫລາຍຈະມີຄວາມຄຽດຮ້າຍໃນໃຈຫລາຍຂນາດໃດໃນຂນະທີ່ຫນີອອກໄປ, ເພາະບາງຄົນໃນພວກເຂົາບໍ່ຍອມທີ່ຈະເຂົ້າໃຈວ່າເປັນຫຍັງພຣະເຢຊູຈຶ່ງໃຫ້ອະພັຍແກ່ຍິງນັ້ນແລະລາວກໍໄດ້ຄືນດີກັບພຣະເຈົ້າຢ່າງຖືກຕ້ອງ. ພວກເຂົາສູນເສັຽອຳນາດໄປແລະຜູ້ທີ່ເຫລືອຢູ່ທີ່ນັ້ນກໍມີແຕ່ພຣະເຢຊູທີ່ຍັງຢືນຢູ່ເພື່ອຕັດສິນຍິງຄົນນັ້ນ.

ພຣະເຢຊູຊົງຫັນຄວາມສົນໃຈໄປທີ່ຍິງນັ້ນ. ພຣະອົງຊົງຖາມຍິງນັ້ນວ່າມີໃຜລົງໂທດບໍ່, ລາວຕອບວ່າບໍ່ມີຜູ້ໃດລົງໂທດເລີຍ. ພຣະເຢຊູກໍບໍ່ໄດ້ລົງໂທດແຕ່ກັບປ່ອຍນາງໄປ, ແຕ່ພຣະອົງຍັງໄດ້ສັ່ງວ່າຢ່າໄດ້ເຮັດບາບອີກຕໍ່ໄປ. ການໃຫ້ອະພັຍເປັນຄວາມຮັບຜິດຊອບຢ່າງນຶ່ງຂອງຊີວິດບໍ່ແມ່ນປະປ່ອຍໄປລ້າໆ ແຕ່ຕ້ອງບອກທາງຊີວິດໃຫມ່ໃຫ້ແລະພຣະອົງໄດ້ຊົງປະທານການເລີ້ມຕົ້ນຊີວິດໃຫມ່ໃຫ້ແກ່ຍິງຄົນນັ້ນນຳ.

ມີຫລາຍຄົນທີ່ຍັງຄົງກະວົນກະວາຍຢູ່ໃນຊີວິດຍ້ອນພວກເຂົາໄດ້ເຮັດຄວາມຫຍຸ້ງຍາກທີ່ເຮັດໃຫ້ພວກເຂົາຕິດຢູ່ໃນບ້ວງແຮ້ວແລະສັບສົນຢູ່ໃນຄວາມບາບທີ່ພວກເຂົາບໍ່ສາມາດທີ່ຈະເອົາຊະນະມັນໄດ້. ພຣະເຢຊູໄດ້ໃຫ້ໂອກາດແກ່ຍິງຄົນນັ້ນໄດ້ເລີ້ມຕົ້ນຊີວິດໃຫມ່ ດັ່ງນັ້ນໃຫ້ພວກເຮົາໄດ້ເລີ້ມສິ່ງໃຫມ່ ໆ ໃນວັນນີ້ເຊັ່ນດຽວກັນ - ເພາະວ່າພຣະເຢຊູໄດ້ຊົງສິ້ນພຣະຊົນຢູ່ເທິງໄມ້ກາງແຂນແລະພຣະອົງກໍໄດ້ຟື້ນຄືນພຣະຊົນມາແລ້ວ. ເຮົາບໍ່ສາມາດກັບຄືນໄປແກ້ໄຂລຶບລ້າງສິ່ງທີ່ເກີດຂຶ້ນໃນອະດີດໄດ້ ແຕ່ພວກເຮົາສາມາດທີ່ຈະເລີ້ມຕົ້ນບົດ ຮຽນຊີວິດ ບົດໃຫມ່ໃນວັນນີ້ໄດ້. ເພາະວ່າພຣະເຈົ້າໄດ້ຊົງໃຫ້ອະພັຍເຣື່ອງທີ່ເກີດຂຶ້ນໃນອະດີດໃຫ້ເຮົາແລ້ວ, ດັ່ງນັ້ນພວກເຮົາຈຶ່ງສາມາດທີ່ຈະດຳເນີນຊີວິດທີ່ມີຄວາມ

ຫວັງໃນອະນາຄົດໄດ້.

## 4. ຜູ້ປະທານອິສຣະພາບທີ່ແທ້ຈິງ ( ໂຢຮັນ 8: 30-36 )

ຫລັງຈາກໄດ້ຈົດບັນທຶກການສະແດງອາການບໍ່ເຫມາະສົມຂອງພວກຟາຣີຊາຍ ພ້ອມທັງການຕິດຕາມເບິ່ງເຫດການໃນເຣື່ອງຂອງຍິງນັ້ນທີ່ເຮັດຜິດໃນຖານຫລິ້ນຊູ້, ໂຢຮັນໄດ້ບອກວ່າມີຫລາຍຄົນໄດ້ມາເຊື່ອພຣະເຢຊູ. ພຣະອົງໄດ້ຊົງຫນູນໃຈໃຫ້ພວກເຂົາໃຫ້ຕັ້ງຫມັ້ນຢູ່ໃນຖ້ອຍຄຳ, ເພື່ອຈະເຮັດໃຫ້ຕົນເອງເປັນທີ່ເຫມາະສົມໃນຖານະເປັນສາວົກຂອງພຣະອົງ. ໃນເວລານີ້ພວກເພິ່ນໄດ້ຮູ້ຄວາມຈິງກ່ຽວກັບການທີ່ພຣະເຢຊູໄດ້ຊົງປົດປ່ອຍເຂົາໃຫ້ເປັນອິສຣະແລ້ວ, ແມ່ນພຣະອົງນັ້ນແຫລະທີ່ເປັນຜູ້ໂຜດໃຫ້ພົ້ນທີ່ແທ້ຈິງ.

ພວກເຂົາມີຄວາມສງົບສົນເທ່ໃນພຣະຄຳຂອງພຣະອົງວ່າ ເປັນຫຍັງພວກເຂົາຈຶ່ງຕ້ອງການຄວາມມີສິດເສຣີພາບເພາະໃນກຸ່ມພວກເຂົາບໍ່ມີຜູ້ໃດເປັນຂ້າທາດຈັກຄົນ. ພວກເຂົາເປັນເຊື້ອສາຍມາຈາກອັບຣາຮາມແລະໃນແຕ່ລະ ເຊັ່ນຄົນກໍບໍ່ເຄີຍມີການຕົກເປັນທາດເລີຍ. ພຣະເຢຊູໄດ້ຊົງເຕືອນພວກເຂົາວ່າ ເຖິງແມ່ນວ່າພວກເຂົາຈະບໍ່ໄດ້ເປັນຂ້ອຍ ຂ້າທາງດ້ານການປົກຄອງ, ແຕ່ພວກເຂົາກໍເປັນຂ້ອຍຂ້າຂອງຄວາມບາບແລະມີພຽງພຣະບຸດອົງດຽວເທົ່ານັ້ນທີ່ຈະປົດປ່ອຍພວກເຂົາໃຫ້ມີອິສຣະຈາກສິ່ງນີ້ໄດ້.

ທ່ານເຄີຍດີ້ນລົນເພື່ອຈະໃຫ້ຫລຸດພົ້ນຈາກຄວາມບາບບາງຢ່າງ ທີ່ຍາກທີ່ສຸດທີ່ຈະກຳຈັດອອກໄປໄດ້ບໍ່? ທ່ານໄດ້ພະຍາຍາມມາຫລາຍເທື່ອແລ້ວແຕ່ກໍກັບໄປເຮັດມັນອີກຄືເກົ່າແມ່ນບໍ່? ພຣະເຢຊູຊົງປະທານການໃຫ້ອະພັຍແລະຄວາມຫວັງໃຫ້ແລ້ວ ຄືຄວາມຫວັງທີ່ຈະໄດ້ຄວາມຫລຸດພົ້ນຈາກບາບ. ການທີ່ໄດ້ຮັບການໃຫ້ອະພັຍແລະໄດ້ຫລຸດພົ້ນຈາກອຳນາດຄວາມຊົ່ວຮ້າຍຂອງຄວາມບາບ ແມ່ນມີຊີວິດທີ່ມີອິສຣະພາບທີ່ແຕກຕ່າງຈາກແຕ່ກ່ອນທີ່ສຸດ. ແຕ່ພວກເຮົາຈຳເປັນຕ້ອງຕິດຕາມແລະເພິ່ງໃນພຣະຄຳຂອງພຣະເຢຊູຕໍ່ໄປ. ຄວາມມີອິສຣະພາບທີ່ແທ້ຈິງນັ້ນຄືມີອິສຣະພາບທີ່ຈະເຮັດຕາມນ້ຳພຣະທັຍຂອງພຣະເຈົ້າບໍ່ແມ່ນຕາມຈິດໃຈຂອງຕົນເອງ.

### ບົດຮຽນຊີວິດ

- ເຖິງແມ່ນວ່າເຮົາບໍ່ໄດ້ເຮັດບາບຖ້າມກາງສາທາຣະນະຊົນ ແຕ່ພຣະເຈົ້າຊົງເຫັນບາບທີ່ເຮົາເຮັດ
- ຄວາມບາບຂອງເຮົາໄດ້ຖືກພຣະບັນຍັດກ່າວໂທດ ຖ້າປາສຈາກການໃຫ້ອະພັຍຈາກພຣະເຈົ້າເຮົາຈະຕ້ອງເປັນຜູ້ຮັບຜົນກັມທີ່ຕາມມາ.
- ພຣະເຢຊູພ້ອມແລ້ວທີ່ຈະໃຫ້ອະພັຍໂທດບາບຂອງເຮົາ ແລະເຮົາສາມາດທີ່ຈະເລີ້ມຕົ້ນຊີວິດໃຫມ່ໄດ້
- ພຣະເຢຊູສາມາດຍົກໂທດໃຫ້ຫລຸດພົ້ນຜົນຂອງຄວາມບາບໄດ້(ຄວາມຕາຍ) ແລະສາມາດປົດປ່ອຍພວກເຮົາໃຫ້ມີອິສຣະພາບຈາກອຳນາດຂອງຄວາມບາບໃນປັດຈຸບັນນີ້ໄດ້

ທ່ານຈະຕອບສນອງຕໍ່ບົດຮຽນໃນວັນນີ້ແນວໃດ? ທ່ານຢາກສແວງຫາການໃຫ້ອະພັຍໂທດບາບຈາກພຣະເຈົ້າບໍ່? ທ່ານຢາກມີອິສຣະພາບຈາກອຳນາດຂອງຄວາມບາບບໍ່?

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org - ap ແປແລະຮຽບຮຽງ